ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງ

ເລກທີ 57/ສພຂ.ຊຍ

ໄຊຍະບູລີ, ວັນທີ 28 ສິງຫາ 2023

# ມະຕິ

## ກອງປະຊຸມສະພາປະຊາຊົນແຂວງ

## ວ່າດ້ວຍການຮັບຮອງເອົາ ບົດລາຍງານການຈັດຕັ້ງປະຕິບັດວຽກງານ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023 ຂອງສະພາປະຊາຊົນແຂວງ ຊຸດທີ II

- ອີງຕາມ ກົດໝາຍ ວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍ ວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍ ວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 60 ກອງປະຊຸມສະໄໝສາມັນ ປະຈຳຫົກເດືອນຕົ້ນປີ ຂອງສະມາຊິກສະພາປະຊາຊົນຂັ້ນແຂວງ.
- ອີງຕາມ ແຜນວຽກຈຸດສຸມ ປະຈຳປີ 2023 ຂອງຄະນະປະຈຳສະພາປະຊາຊົນແຂວງ ສະບັບເລກທີ 36/ຄປຈ.ຊຍ, ລົງວັນທີ 3 ມີນາ 2023.
- ອີງຕາມ ຄຳແນະນຳຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 18/ຄປຈ, ລົງວັນທີ 17 ກໍລະກົດ 2023.

ຜ່ານການພິຈາລະນາຢ່າງເລິກເຊິ່ງ, ຖີ່ຖ້ວນ ຂອງສະມາຊິກສະພາປະຊາຊົນແຂວງ ຕໍ່ບົດລາຍງານ ການເຄື່ອນໄຫວວຽກງານ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023 ຂອງສະພາປະຊາຊົນແຂວງ ຊຸດທີ II ຄັ້ງວັນທີ 23-26 ສິງຫາ 2023.

### ກອງປະຊຸມ ຕົກລົງ:

**ມາດຕາ 1:** ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດ ວຽກງານ 6 ເດືອນຕົ້ນປີ 2023.

ໃນ 6 ເດືອນຜ່ານມາ ສະພາປະຊາຊົນແຂວງ ໄດ້ປະຕິບັດ ພາລະບົດບາດ ສິດ ແລະ ໜ້າທີ່ຂອງຕົນ ມີຜົນສຳເລັດຫຼາຍດ້ານເປັນຕົ້ນ: ຈັດກອງປະຊຸມທາບທາມຄຳເຫັນໃສ່ຮ່າງກົດໝາຍ 3 ຄັ້ງ ມີ 11 ສະບັບ; ຄົ້ນຄວ້າ ແລະ ປະກອບຄຳເຫັນ ໃສ່ຮ່າງກົດໝາຍທີ່ສະພາແຫ່ງຊາດ ແລະ ກະຊວງຈັດຂຶ້ນ 10 ຄັ້ງ ມີ 11 ສະບັບ; ເຂົ້າຮ່ວມປະເມີນກົດໝາຍຂົງເຂດຍຸຕິທຳ 4 ສະບັບ; ທາບທາມຮ່າງນິຕິກຳໃຕ້ກົດໝາຍຂອງແຂວງ 4 ຄັ້ງ ມີ 3 ສະບັບ; ພິຈາລະນາ ແລະ ຮັບຮອງນິຕິກຳໃຕ້ກົດໝາຍຂອງແຂວງ 2 ສະບັບ; ພິຈາລະນາ ແລະ ຮັບຮອງ ບັນຫາພື້ນຖານທີ່ສຳຄັນຂອງແຂວງ ຜ່ານກົນໄກດຳເນີນກອງປະຊຸມສາມັນ ເທື່ອທີ 4 ຈຳນວນ 20 ສະບັບ, ຮັບຮອງເອົາເປັນມະຕິ 7 ສະບັບ, ຮັບຮອງໃນກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ 43 ເນື້ອໃນ, ຮັບຮອງເອົາເປັນມະຕິ 6 ສະບັບ; ດຳເນີນກອງປະຊຸມຮ່ວມ ກັບ ຄະນະປະຈຳແນວລາວສ້າງຊາດ, ຫ້ອງວ່າການແຂວງ ເພື່ອຮັບຮອງເອົາມະຕິ 2 ສະບັບ; ພິຈາລະນາ ແລະ ຮັບຮອງເອົາການແຕ່ງຕັ້ງຜູ້ພິພາກສາ ສານປະຊາຊົນແຂວງ 7 ທ່ານ; ຕິດຕາມກວດກາການຈັດເກັບລາຍຮັບຢູ່ດ່ານສາກົນ ໄດ້ 4 ດ່ານ; ຈັດກອງປະຊຸມສະຫຼຸບຕີລາຄາການຈັດຕັ້ງປະຕິບັດການແກ້ໄຂຄຳຮ້ອງຂໍຄວາມເປັນທຳ, ຄຳສະເໜີ ແລະ ສາຍດ່ວນ ໄດ້ 1 ຄັ້ງ; ໄດ້ຮັບຄຳຮ້ອງຂໍຄວາມເປັນທຳ 10 ເລື່ອງ, ແກ້ໄຂແລ້ວ 8 ເລື່ອງ, ພວມສືບຕໍ່ແກ້ໄຂ 2 ເລື່ອງ; ລົງຕິດຕາມກວດກາວຽກງານສາສະໜາ ໄດ້ 4 ເມືອງ; ເຂົ້າຮ່ວມຝຶກອົບຮົມການຍົກສູງຂີດຄວາມສາມາດໃຫ້ສະມາຊິກສະພາປະຊາຊົນແຂວງ ໄດ້ 9 ຄັ້ງ ມີ 9 ຫົວຂໍ້; ລົງພົບປະ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ ເທື່ອທີ 4 ໄດ້ 117 ຈຸດ ກວມເອົາ 118 ບ້ານ ມີຜູ້ເຂົ້າຮ່ວມ 13.666 ຄົນ, ຍິງ 8.162 ຄົນ, ໄດ້ຮັບຄຳສະເໜີ 170 ເລື່ອງ ແລະ ສົ່ງໃຫ້ພະແນກການທີ່ກ່ຽວຂ້ອງຊີ້ແຈງ 170 ເລື່ອງ, ໄດ້ລະດົມວັດຖຸ ແລະ

ເງິນສົດ ຊ່ວຍອົງການຈັດຕັ້ງ ແລະ ຜູ້ມີສິດເລືອກຕັ້ງ ຈຳນວນ 78,6 ລ້ານກີບ. ເຂົ້າຮ່ວມສະເຫຼີມສະຫຼອງປີສາມັກຄີ ລາວ-ຫວຽດນາມ ປະຈຳປີ 2022 ແລະ ເຂົ້າຮ່ວມຕ້ອນຮັບ ການພົບປະແລກປ່ຽນບົດຮຽນ ຄະນະຜູ້ແທນຂັ້ນສູງ ຂອງ ສສ ຫວຽດນາມ ທີ່ມາຢ້ຽມຢາມ ແລະ ເຮັດວຽກຢູ່ແຂວງໄຊຍະບູລີ.

ມາດຕາ 2: ຮັບຮອງເອົາທິດທາງແຜນການ 6 ເດືອນທ້າຍປີ 2023.

1. ດ້ານນິຕິກຳ

- ຄົ້ນຄວ້າທາບທາມຮ່າງກົດໝາຍທີ່ສະພາແຫ່ງຊາດ ກຳນົດໃຫ້ 25 ສະບັບ, ໃນນີ້ສ້າງໃໝ່ 9 ສະບັບ, ປັບປຸງ 16 ສະບັບ; ສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ ໃຫ້ໄດ້ 3 ສະບັບຂຶ້ນໄປ.

- ຊຸກຍູ້ບັນດາຂະແໜງການທີ່ກ່ຽວຂ້ອງ ຈັດຕັ້ງການປະເມີນກົດໝາຍ, ນິຕິກຳໃຕ້ກົດໝາຍ ໃນຂົງເຂດປ້ອງກັນ ຊາດ-ປ້ອງກັນຄວາມສະຫງົບ, ຂົງເຂດສະພາແຫ່ງຊາດ ໃຫ້ສອດຄ່ອງກັບສະພາບຄວາມເປັນຈິງແຕ່ລະໄລຍະ.

2. ການຕົກລົງບັນຫາສຳຄັນພື້ນຖານຂອງແຂວງ

ໃນໄລຍະ 6 ເດືອນທ້າຍປີ ຈະໄດ້ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເນື້ອໃນຕ່າງໆ ຜ່ານກົນໄກການດຳເນີນກອງປະຊຸມ ດັ່ງນີ້:

2.1.ກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາປະຊາຊົນແຂວງ ຊຸດທີ II ມີເນື້ອໃນຕົ້ນຕໍ ດັ່ງນີ້:

1) ບົດລາຍງານ ຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2023 ແລະ ແຜນການ ປະຈຳປີ 2024.

2) ບົດລາຍງານ ຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2023 ແລະ ແຜນການ ປະຈຳປີ 2024.

3) ບົດລາຍງານ ຂອງອົງການປົກຄອງແຂວງ ກ່ຽວກັບຜົນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ.

4) ບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະ ແຜນການ ປະຈຳປີ 2024 ຂອງອົງການກວດສອບ ປະຈຳພາກເໜືອ; ບົດລາຍງານ ຜົນການກວດສອບບົດສະຫຼຸບຊາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2022.

5) ບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະ ແຜນການ ປະຈຳປີ 2024 ຂອງອົງການກວດກາລັດແຂວງ; ບົດລາຍງານ ຜົນການກວດກາ ຕາມຜົນການກວດສອບ ປະຈຳປີ 2021.

6) ບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024 ຂອງສານປະຊາຊົນແຂວງ ແລະ ອົງການໄອຍະການປະຊາຊົນແຂວງ.

7) ບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024 ຂອງສະພາປະຊາຊົນແຂວງ.

8) ບົດປະກອບຄຳເຫັນ ຂອງແນວລາວສ້າງຊາດແຂວງ ແລະ ອົງການຈັດຕັ້ງມະຫາຊົນ ຕໍ່ການເຄື່ອນໄຫວວຽກງານຂອງສະພາປະຊາຊົນແຂວງ.

9) ຈັດຕັ້ງການປະເມີນຜົນ ແລະ ໃຫ້ຄະແນນ ຕໍ່ຄວາມຮັບຜິດຊອບຂອງບຸກຄະລາກອນ ທີ່ຂຶ້ນລາຍງານ, ຊີ້ແຈງ ແລະ ຕອບຄຳຊັກຖາມ ໃນກອງປະຊຸມສະພາປະຊາຊົນແຂວງ.

10) ພິຈາລະນາ ແລະ ຮັບຮອງເອົາບັນດານິຕິກຳໃຕ້ກົດໝາຍຂອງແຂວງ.

2.2. ກະກຽມຄວາມພ້ອມ ໃນການດຳເນີນກອງປະຊຸມ ປະຈຳປີ 2023 ຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 7, ກອງປະຊຸມຄົບຄະນະຂອງ 3 ຄະນະກຳມະການ, ຄະນະເລຂາທິການ ແລະ ກອງປະຊຸມປະຈຳເດືອນກໍລະກົດ ຫາ ທັນວາ ຂອງຄະນະປະຈຳສະພາປະຊາຊົນແຂວງ ເພື່ອຮັບປະກັນການພິຈາລະນາຕົກລົງບັນຫາສຳຄັນພື້ນຖານຂອງແຂວງ ຕິດພັນກັບແຜນຈຸດສຸມຂອງສະພາປະຊາຊົນແຂວງ ຕາມແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ ແລະ ສອດຄ່ອງກັບສະພາບຕົວຈິງຂອງແຂວງໃນແຕ່ລະໄລຍະ.

3. ການຕິດຕາມກວດກາ.

1) ຕິດຕາມກວດກາ ດ້ວຍການຮັບຟັງການລາຍງານຂອງອົງການປົກຄອງແຂວງ, ສານປະຊາຊົນແຂວງ, ອົງການໄອຍະການປະຊາຊົນແຂວງ, ອົງການກວດສອບປະຈຳພາກເໜືອ, ອົງການກວດກາລັດແຂວງ ແລະ ພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ ໃນກອງປະຊຸມສະໄໝສາມັນ, ກອງປະຊຸມຄົບຄະນະປະຈຳປີ ຂອງບັນດາຄະນະກຳມະການ ຂອງສະພາປະຊາຊົນແຂວງ ລວມທັງການຊັກຖາມ, ຊີ້ແຈງ ຕໍ່ບັນຫາທີ່ພົ້ນເດັ່ນຂອງສັງຄົມ.

2) ຕິດຕາມກວດກາ ດ້ວຍການດຳເນີນກອງປະຊຸມຮ່ວມ ລະຫວ່າງ ຄະນະປະຈຳສະພາປະຊາຊົນແຂວງ ກັບ ອົງການປົກຄອງແຂວງ, ສານປະຊາຊົນແຂວງ, ອົງການໄອຍະການປະຊາຊົນແຂວງ, ອົງການກວດກສອບປະຈຳພາກເໜືອ, ອົງການກວດກາລັດແຂວງ, ຄະນະປະຈຳແນວລາວສ້າງຊາດ ແລະ ພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ ເພື່ອປຶກສາຫາລື ແກ້ໄຂບັນຫາທີ່ເຄັ່ງຮ້ອນຂອງແຂວງ.

3) ຈັດຕັ້ງການດຳເນີນກອງປະຊຸມ ປະຈຳປີ 2023 ຂອງບັນດາຄະນະກຳມະການ ແລະ ຄະນະເລຂາທິການ; ກອງປະຊຸມຮ່ວມ ລະຫວ່າງ ຄະນະເລຂາທິການ ກັບ 3 ຄະນະກຳມະການ ແລະ ບັນດາພະແນການ, ອົງການ, ກົມກອງ.

4) ຕິດຕາມກວດກາ ການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ຕິດພັນກັບການຕິດຕາມກວດກາ ການຈັດຕັ້ງ ມະຕິກອງປະຊຸມສະໄໝສາມັນ ເທື່ອທີ 4, ເທື່ອທີ 5 ຂອງສະພາປະຊາຊົນແຂວງ ຊຸດທີ II.

5) ຕິດຕາມກວດກາ, ຊຸກຍູ້ການປະເມີນ ການຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທີ່ໄດ້ປະກາດນຳໃຊ້ໄປແລ້ວ; ຕິດຕາມກວດກາ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ; ບັນດາໂຄງການລົງທຶນຂອງລັດ ທີ່ເຫັນວ່າມີຄວາມຫຍຸ້ງຍາກ, ສັບສົນ ສິ່ງຜົນກະທົບຢ່າງຫຼວງຫຼາຍ ຕໍ່ການດຳລົງຊີວິດ ຂອງປະຊາຊົນບັນດາເຜົ່າ ພາຍໃນແຂວງໄຊຍະບູລີ.

6) ຕິດຕາມຊຸກຍູ້ຜ່ານກົນໄກການຮັບ, ພິຈາລະນາ, ແກ້ໄຂ ຄຳສະເໜີ, ສາຍດ່ວນ ແລະ ຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ. ພ້ອມທັງດຳເນີນກອງປະຊຸມຄົ້ນຄວ້າແກ້ໄຂຄຳຮ້ອງ, ຄຳສະເໜີ ແລະ ສາຍດ່ວນ ຮ່ວມກັບອົງການປົກຄອງແຂວງ.

7) ຕິດຕາມກວດກາ ການຈັດຕັ້ງປະຕິບັດໜ້າທີ່ ຂອງບຸກຄະລາກອນ ທີ່ສະພາປະຊາຊົນແຂວງ ເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ.

8) ສືບຕໍ່ຕິດຕາມກວດກາ ນິຕິກຳໃຕ້ກົດໝາຍ ທີ່ສະພາປະຊາຊົນແຂວງ ຮັບຮອງ ຕິດພັນກັບການລົງພິມປະເຜີຍແຜ່ຜູ້ມີສິດເລືອກຕັ້ງ.

4. ດ້ານການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາປະຊາຊົນແຂວງ.

1) ເພີ່ມທະວີວຽກງານການເມືອງ-ແນວຄິດ, ຕິດພັນກັບການຍົກລະດັບທິດສະດີ, ວິຊາສະເພາະ ໃຫ້ໄດ້ 2 ທ່ານຂຶ້ນໄປ ແລະ ການປະຕິບັດນະໂຍບາຍຕ່າງໆ ຕໍ່ສະມາຊິກສະພາປະຊາຊົນແຂວງ, ພະນັກງານ-ລັດຖະກອນ, ສະມາຊິກພັກ ຕິດພັນກັບການຍູ້ແຮງຂະບວນການແຂ່ງຂັນ, ຮັກຊາດ ແລະ ພັດທະນາ.

2) ເຂົ້າຮ່ວມກອງປະຊຸມຝຶກອົບຮົມຫົວຂໍ້ຕ່າງໆ ຕາມແຜນການຂອງສະພາແຫ່ງຊາດ; ຍາດແຍ່ງງົບປະມານຈາກສະພາແຫ່ງຊາດ ແລະ ອົງການປົກຄອງແຂວງ ເພື່ອຈັດຝຶກອົບຮົມຍົກສູງຂີດຄວາມສາມາດໃຫ້ແກ່ສະມາຊິກສະພາປະຊາຊົນແຂວງ ບຸກຄະລາກອນຂອງແຂວງ ເພື່ອຮັບປະກັນການປະຕິບັດໜ້າທີ່ ຕາມກົດໝາຍກຳນົດໄວ້ ໃຫ້ໄດ້ 1 ຄັ້ງຂຶ້ນໄປ; ປະສານສົມທົບ ກັບ ສະພາປະຊາຊົນແຂວງໃດໜຶ່ງ ເພື່ອຈັດຕັ້ງການແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ.

3) ສືບຕໍ່ເພີ່ມທະວີການປະສານງານ ລະຫວ່າງ ສະພາປະຊາຊົນແຂວງ ກັບ ອົງການປົກຄອງທ້ອງຖິ່ນ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ສານປະຊາຊົນແຂວງ, ອົງການໄອຍະການປະຊາຊົນແຂວງ, ອົງການກວດສອບປະຈຳພາກເໜືອ, ອົງການກວດກາລັດແຂວງ, ເພື່ອເປັນບ່ອນອີງໃນການເຄື່ອນໄຫວວຽກງານ ໃຫ້ມີຄວາມວ່ອງໄວ, ໂປ່ງໃສ, ຮັບປະກັນຄຸນນະພາບ, ສາມາດກວດສອບໄດ້ຄວາມຖືກຕ້ອງຕາມກົດໝາຍ.

4) ສືບຕໍ່ຍາດແຍ່ງງົບປະມານຈາກສະພາແຫ່ງຊາດ, ອົງການປົກຄອງແຂວງ ເພື່ອຈັດຝຶກອົບຮົມໃຫ້ສະມາຊິກສະພາປະຊາຊົນແຂວງ ແລະ ບຸກຄະລາກອນ ຂອງອົງການປົກຄອງແຂວງ ໃຫ້ໄດ້ 1 ຄັ້ງຂຶ້ນໄປ.

5) ສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອຍົກລະດັບທາງດ້ານທິດສະດີການເມືອງ-ການປົກຄອງ ໄລຍະສັ້ນ ແລະ ໄລຍະຍາວ ຢູ່ພາຍໃນ-ຕ່າງປະເທດ ໃຫ້ພະນັກງານຫຼັກແຫຼ່ງ, ພະນັກງານ-ລັດຖະກອນ ພາຍໃນສະພາປະຊາຊົນແຂວງ.

6) ສືບຕໍ່ປັບປຸງກົງຈັກການຈັດຕັ້ງ ພາຍໃນສະພາປະຊາຊົນແຂວງ, ໜ່ວຍງານຊ່ວຍວຽກຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ແລະ ບັນຈຸຊັບຊ້ອນບຸກຄະລາກອນ ເຂົ້າໃນຕຳແໜ່ງງານໃຫ້ເໝາະສົມ.

5. ການເຄື່ອນໄຫວຂອງຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ.

1) ສຸມໃສ່ຊຸກຍູ້ ການຈັດຕັ້ງປະຕິບັດ ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ໃນການຜັນຂະຫຍາຍແຜນການຂອງສະພາປະຊາຊົນແຂວງ; ການຄົ້ນຄວ້າປະກອບ ຄຳເຫັນໃສ່ຮ່າງກົດໝາຍ, ນິຕິກຳໃຕ້ກົດໝາຍ; ການຕິດຕາມກວດກາ ການຈັດຕັ້ງປະຕິບັດກົດໝາຍ, ນິຕິກຳໃຕ້ກົດໝາຍ, ມະຕິກອງປະຊຸມສະພາປະຊາຊົນແຂວງ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານຂອງເມືອງ, ບັນດາໂຄງການລົງທຶນຂອງລັດ ທີ່ຈັດຕັ້ງປະຕິບັດຢູ່ແຕ່ລະເຂດເລືອກຕັ້ງເມືອງ; ການປະສານສົມທົບ ກັບ ອົງການປົກຄອງເມືອງ ເພື່ອການກະກຽມເນື້ອໃນກ່ອນກອງປະຊຸມສະພາປະຊາຊົນແຂວງແຕ່ລະຄັ້ງ.

2) ເອົາໃຈໃສ່ຊຸກຍູ້ການກະກຽມ ແລະ ດຳເນີນກອງປະຊຸມ ປະຈຳປີ 2023 ຂອງຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ກ່ອນກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາປະຊາຊົນແຂວງ ຊຸດທີ II; ກອງປະຊຸມຮ່ວມລະຫວ່າງ ຄະນະປະຈຳສະພາປະຊາຊົນແຂວງ ກັບ ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ.

3) ເອົາໃຈໃສ່ລົງເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ ເທື່ອທີ 5 ແລະ ເທື່ອທີ 6 ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ຕິດພັນກັບການເກັບກຳບັນຫາຕ່າງໆ ຂອງຜູ້ມີສິດເລືອກຕັ້ງ, ວິເຄາະ, ວິໄຈ ຄຳເຫັນ ຂອງອົງການແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ ເພື່ອສົມທົບກັບອົງການປົກຄອງແຂວງ-ເມືອງ ແກ້ໄຂໃຫ້ທັນເວລາ.

6. ການເຄື່ອນໄຫວວຽກງານການຕ່າງປະເທດ.

1) ເພີ່ມທະວີການຈັດຕັ້ງປະຕິບັດ ວຽກງານພົວພັນຕ່າງປະເທດ ຂອງສະພາແຫ່ງຊາດ, ອົງການປົກຄອງແຂວງ ໃນການຮ່ວມມື ກັບ ປະເທດເພື່ອນມິດຍຸດທະສາດ ເພື່ອເສີມຂະຫຍາຍສາຍພົວພັນການຮ່ວມມື ແລະ ຍາດແຍ່ງບົດຮຽນ ນຳບັນດາສະພາປະຊາຊົນແຂວງ ກັບ ແຂວງເຊີນລາ, ກວາງບິງ, ທາຍບິງ ຂອງ ສສ.ຫວຽດນາມ.

2) ສົມທົບກັບອົງການປົກຄອງແຂວງ ສ້າງເງື່ອນໄຂອຳນວຍຄວາມສະດວກ ໃຫ້ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ເຂົ້າຮ່ວມເຄື່ອນໄຫວກັບລັດຖະສະພາ ບັນດາປະເທດເພື່ອນມິດ, ພາກພື້ນ ແລະ ສາກົນ, ຊຸກຍູ້ສະມາຊິກສະພາປະຊາຊົນແຂວງ ເຂົ້າຮ່ວມກິດຈະກຳພົວພັນການຕ່າງປະເທດ ນຳອົງການປົກຄອງແຂວງ ຕາມພາລະບົດບາດຂອງຕົນ.

**ມາດຕາ 3 ການຈັດຕັ້ງປະຕິບັດ.**

ຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການ, ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ຈັດຕັ້ງປະຕິບັດມະຕິສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 4 ຜົນສັກສິດ.**

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານສະພາປະຊາຊົນແຂວງ

ເພັງມີລັນ ຄຳພັນເພັງ